**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ

ເລກທີ 1262/ກປຈ

ນະຄອນຫຼວງວຽງຈັນ, ວັນທີ 15 ກັນຍາ 2026

## ໜັງສືແຈ້ງເຊີນປະມູນ

1. ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ໃນນາມຕາງໜ້າຄະນະຮັບຜິດຊອບຈັດຊື້ພາຫະນະ ຂໍເຊີນບັນດາບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຍື່ນຊອງປະມູນ ສໍາລັບການສະໜອງພາຫະນະເປັນປະເພດລົດຈັກ (ໃຊ້ນໍ້າມັນ) ຄວາມແຮງ 110 ຊີຊີ ຈໍານວນ 36 ຄັນ, ເພື່ອປະກອບເປັນລົດຮັບໃຊ້ວຽກງານວິຊາສະເພາະ ຂອງກົມສ່ວຍສາອາກອນ ກະຊວງການເງິນ. ກໍານົດເວລາໃນການມອບ-ຮັບລົດແມ່ນພາຍໃນ 45 ວັນ;
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກໍານົດໄວ້ຢູ່ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນການປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ 4 (ຕຶກແຄມຂອງ) ເບີໂທຕິດຕໍ່ 020 55424565, 020 28999891, 020 22042440 ໃນເວລາລັດຖະການ;
4. ເອກະສານປະມູນເລີ່ມຂາຍແຕ່ວັນທີ 15 ກັນຍາ 2026 ຫາ 20 ຕຸລາ 2026. ໃນລາຄາ 3,000,000 ກີບ/ຊອງ ວິທີການຊໍາລະເປັນເງິນສົດ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນໍາໃຊ້ເຂົ້າໃນວຽກງານປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 11:00 ໂມງ ຂອງວັນທີ 20 ຕຸລາ 2026. ຊອງປະມູນທຸກໆຊອງຈະໄດ້ເປີດໃນວັນທີ 20 ຕຸລາ 2026 ເວລາ 11:00 ໂມງ ທີ່ຫ້ອງປະຊຸມກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ 01 (ຕຶກແຄມຂອງ) ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ;
6. ທຸກຊອງປະມູນຕ້ອງມີການຄໍ້າປະກັນດ້ວຍ ແຊັກ (ວີຊ່າ) ຫຼື ໜັງສືຄໍ້າປະກັນອອກໂດຍທະນາຄານ, ຊຶ່ງມີມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄວນດ້ວຍ.

**ຫົວໜ້າກົມ**

**(ຕາງໜ້າຄະນະຮັບຜິດຊອບ)**

ອຸຕະແກ້ວ ແກ້ວດວງສີນ